ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0805/ ຫອຄ.ກຫຄອ

ນະຄອນຫລວງວຽງຈັນ, ວັນທີ 02 ມິຖຸນາ 2020

## ແຈ້ງການ

ເຖິງ : ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳແລະ ການຄ້າແຂວງ,ນະຄອນຫລວງ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ.

ເລື່ອງ: ການກວດສອບປະຫວັດຜູ້ລົງທຶນຕ່າງປະເທດ;

- ອີງຕາມໜັງສືແຈ້ງຕອບຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 728 /ຫວກ ລົງວັນທີ 21 ກຸມພາ 2020.

ຫ້ອງການກະຊວງອຸດສາຫະກຳແລະ ການຄ້າ ແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດກ່ຽວກັບໜັງສືແຈ້ງຕອບ ຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 728/ຫວກ, ລົງວັນທີ 21 ກຸມພາ 2020 ວ່າດ້ວຍການກວດສອບປະຫວັດຜູ້ລົງທຶນຕ່າງປະເທດ ດັ່ງລຸ່ມນີ້ :

1. ສຳລັບຫົວໜ່ວຍແຈ້ງຂຶ້ນທະບຽນວິສາຫະກິດໃໝ່ແມ່ນໃຫ້ກວດສອບພາຍຫລັງອອກໃບທະບຽນວິສາຫະກິດ ໂດຍໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ສົ່ງສຳເນົາໃບທະບຽນວິສາຫະກິດ ຄັດຕິດຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດສົ່ງໃຫ້ຂະແໜງ ປກສ, ສຳລັບການແຈ້ງຕອບກັບມານັ້ນແມ່ນໃຫ້ຂະແໜງ ປສກ ຕອບສະເພາະຫົວໜ່ວຍທີ່ບໍ່ເຫັນດີ ພ້ອມກັບບອກເຫດຜົນທີ່ບໍ່ເຫັນດີ ເພື່ອເປັນບ່ອນອີງຕອບຜູ້ລົງທຶນພ້ອມ ;

2. ສຳລັບການປ່ຽນແປງເນື້ອໃນທະບຽນວິສາຫະກິດ ທີ່ຕິດພັນກັບການປ່ຽນ, ການເພີ່ມຜູ້ລົງທຶນທີ່ເປັນຄົນຕ່າງປະເທດແມ່ນໃຫ້ສົ່ງກວດສອບປະຫວັດກ່ອນ ເວລາຂະແໜງ ປກສ ເຫັນດີແລ້ວ ຈຶ່ງປ່ຽນແປງເນື້ອໃນທະບຽນວິສາຫະກິດໃຫ້ ;

3. ສຳລັບເອກະສານຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ທີ່ຜູ້ລົງທຶນມາຍື່ນນຳເຈົ້າໜ້າທີ່ທະບຽນວິສາຫະກິດຜ່ານມາກ່ອນມີແຈ້ງການສະບັບນີ້ ທີ່ຍັງລໍຖ້າຄຳເຫັນຂອງຂະແໜງ ປກສ ແມ່ນໃຫ້ອອກທະບຽນວິສາຫະກິດໃຫ້ຜູ້ລົງທຶນເລີຍໂດຍບໍ່ຕ້ອງລໍຖ້າ;

ດັ່ງນັ້ນ, ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ນ.ບານສະຕິ ເທບພະວົງ

สแกนด้วย CamScanner